## ມິຊຊາອາທິດທີ 11 ກຳນົດທຳມະດາ
## ວັນທີ 18 ມິຖຸນາ 2023



**ພຣະວໍຣະສານໂດຍນັກບຸນມັດເທວ**

ໃນເວລານັ້ນ, ພຣະເຢຊູເຈົ້າທອດພຣະເນດເຫັນຝູງຊົນຈຳນວນມາກ, ພຣະອົງຊົງຮູ້ສຶກສົມເພດເວດທະນາ, ຍ້ອນເຂົາເຫລົ່ານັ້ນມີສີໜ້າອິດເມື່ອຍລົ້ມທ່າວຄືແກະບໍ່ມີຜູ້ລ້ຽງດູ, ພຣະອົງຈຶ່ງກ່າວແກ່ພວກສາວົກວ່າ: "ເຂົ້າຈະກ່ຽວໃນນາມີຫລາຍ ແຕ່ຄົນງານມີໜ້ອຍ. ເພາະສະນັ້ນພວກເຈົ້າຈົ່ງວອນຂໍໃຫ້ເຈົ້າຂອງນາສົ່ງຄົນງານມາກ່ຽວເຖີດ".

ເມື່ອພຣະເຢຊູເຈົ້າໄດ້ຊົງຮຽກເອົາອັກຄະສາວົກສິບສອງຄົນເຂົ້າມາຫາແລ້ວ, ພຣະອົງໄດ້ຊົງມອບສິດອຳນາດໃຫ້ພວກເຂົາບັງຄັບຈິດຊົ່ວຮ້າຍຕ່າງໆ, ທັງສາມາດຂັບໄລ່ຜີແລະປິ່ນປົວພະຍາດໂລຄາທຸກຊະໜິດໄດ້. ຊື່ຂອງອັກຄະສາວົກສິບສອງຄົນຄື: ຜູ້ກົກໝູ່ແມ່ນຊີມອນ, ຜູ້ໄດ້ຮັບຊື່ໃໝ່ວ່າເປໂຕ, ກັບອັນເດຣຜູ້ນ້ອງຊາຍ; ຕໍ່ໄປແມ່ນຢາໂກເບ, ບຸດຂອງເຊເບເດ, ກັບຢວງຜູ້ນ້ອງຊາຍ, ຟີລິບ ແລະບາກໂທໂລເມ; ໂທມາ ແລະມັດເທວຄົນເກັບສ່ວຍ; ຢາໂກເບ, ບຸດຂອງອັນເຟ ແລະທັດເດ. ຊີມອນ ຜູ້ໃຈຮ້ອນຮົນ ແລະຢູດາອິສກາຣີອົດ ຜູ້ໄດ້ມອບພຣະອົງ. ພຣະເຢຊູເຈົ້າຊົງໃຊ້ອັກຄະສາວົກທັງສິບສອງໄປເທດສະໜາສັ່ງສອນ ໂດຍໃຫ້ຄວາມແນະນຳດັ່ງຕໍ່ໄປນີ້: "ຢ່າໄປຕາມເສັ້ນທາງພວກຄົນຕ່າງຊາດ, ແລະຢ່າເຂົ້າໄປໃນເມືອງຊາວຊາມາຣີ. ແຕ່ວ່າກ່ອນອື່ນ ຈົ່ງໄປຫາແກະແຫ່ງຊາດອິສຣາແອນທີ່ເສຍໄປ. ໃນເວລາເດີນທ່ຽວໄປດັ່ງນີ້, ຈົ່ງປະກາດວ່າ: "ພຣະຣາໄຊສະຫວັນໃກ້ເຂົ້າມາແລ້ວ." ຈົ່ງປິ່ນປົວຄົນປ່ວຍ, ປຸກຄົນຕາຍໃຫ້ກັບເປັນຄືນມາ, ຊຳລະຄົນເປັນຂີ້ທູດເປັນເຮື້ອນໃຫ້ສະອາດບໍລິສຸດ, ຂັບໄລ່ຜີປີສາດ. ພວກເຈົ້າໄດ້ຮັບມາລ້າໆ ກໍຈົ່ງໃຫ້ເຂົາລ້າໆດ້ວຍ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດນີ້ໃນບົດອ່ານທີໜຶ່ງແລະໃນພຣະວໍລະສານກໍລ້ວນແຕ່ກ່າວເຖິງການເລືອກສັນຂອງພຣະເຈົ້າ. ໃນບົດອ່ານທີໜຶ່ງຈາກໜັງສືອົບພະຍົບ, ພຣະເຈົ້າໄດ້ເລືອກສັນປະຊາກອນອິສຣາແອນໃຫ້ເປັນປະຊາກອນພິເສດແລະສັກສິດຂອງພຣະອົງ. ສາຍເຫດທີ່ພຣະອົງຊົງເລືອກປະຊາກອນອິສຣາແອນນັ້ນ ຍ້ອນພຣະອົງສົງສານພວກເຂົາແລະໄດ້ຊ່ວຍເຫລືອພວກເຂົາອອກຈາກການເປັນຂ້ອຍທາດຢູ່ປະເທດເອຢິບ.

ສ່ວນວາຈາພຣະເຈົ້າໃນພຣະວໍລະສານວັນອາທິດນີ້, ພຣະເຢຊູເຈົ້າໄດ້ຊົງເລືອກສັນລູກສິດສິບສອງຄົນແລະໄດ້ມອບສິດອຳນາດແກ່ພວກເຂົາ ເພື່ອຈະໄດ້ເປັນຕົວແທນຂອງພຣະອົງໄປປະກາດພຣະລາໄຊສະຫວັນແລະປິ່ນປົວພະຍາດໄລຄາທຸກຊະໜິດ. ສາຍເຫດທີ່ພຣະເຢຊູເຈົ້າເລືອກລູກສິດສິບສອງຄົນນີ້ກໍຍ້ອນພຣະອົງຊົງສົງສານຝູງຊົນທີ່ອິດເມື່ອຍແລະຫລົ້ມທ່າວຄືແກະທີ່ບໍ່ມີຜູ້ນຳ. ສິ່ງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າເມື່ອພຣະເຈົ້າເລືອກສັນພວກເຮົານັ້ນ, ກ່ອນອື່ນໝົດແມ່ນຍ້ອນຮັກພວກເຮົາ. ຫລືເວົ້າອີກຢ່າງ, ກະແສຽກຂອງພວກເຮົາແຕ່ລະຄົນນັ້ນແມ່ນມາຈາກຄວາມຮັກເມດຕາຂອງພຣະເຈົ້າ. ແລະເມື່ອພຣະອົງຊົງເລືອກສັນພວກເຮົາແລ້ວ, ພຣະອົງກໍໄດ້ມີແຜນການແລະພາລະກິດພິເສດສຳລັບພວກເຮົາ. ແລະພາລະກິດພິເສດນີ້ແມ່ນການເປັນພິຍານຢັ້ງຢືນເຖິງຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາແລະຕໍ່ມະນຸດທຸກຄົນ. ຄວາມຮັກນີ້ໄດ້ສະແດງອອກຢ່າງຊັດແຈ້ງໃນການຕາຍຂອງພຣະເຢຊູເຈົ້າບົນໄມ້ກາງເຂນ ເພື່ອຊ່ວຍພວກເຮົາໃຫ້ຮອດຊີວິດ. ດັ່ງທີ່ນັກບຸນເປົາໂລກ່າວໃນບົດອ່ານທີສອງຂອງວັນນີ້ວ່າ: "ຫລັກຖານຢືນຢັນວ່າພຣະເຈົ້າຮັກພວກເຮົາຄື ເວລາພວກເຮົາຍັງເປັນຄົນບາບຢູ່ນັ້ນ, ພຣະກຣິສໂຕເຈົ້າໄດ້ສິ້ນພຣະຊົນເພື່ອພວກເຮົານັ້ນເອງ". ດັ່ງນັ້ນຄຳຕອບຮັບຂອງພວກເຮົາຕໍ່ຄວາມຮັກຂອງພຣະເຈົ້າແມ່ນການທີ່ພວກເຮົາເຊື່ອໃນພຣະອົງ. ແລະຜູ້ທີ່ເຊື່ອໃນພຣະອົງຈະໄດ້ຮັບຊີວິດນິລັນດອນ. ນີ້ແລ, ແມ່ນຂ່າວດີສຳລັບພວກເຮົາຜູ້ໄດ້ຖືກເລືອກສັນເປັນພິເສດໃຫ້ມາເປັນປະຊາກອນຂອງພຣະເຈົ້າຜ່ານທາງສິນລ້າງບາບ. ເພື່ອພວກເຮົາຈະໄດ້ເປັນປະຊາກອນສັກສິດແລະມີສ່ວນໃນການໄຖ່ກູ້ຂອງພຣະເຢຊູເຈົ້າ.

**ບົດພາວະນາ**

ໂອພຣະເຈົ້າ, ລູກຂໍຂອບພຣະຄຸນພຣະອົງສຳລັບຄວາມຮັກທີ່ພຣະອົງຊົງມີຕໍ່ລູກ ດ້ວຍການເລືອກສັນລູກໃຫ້ເປັນລູກຂອງພຣະອົງຜ່ານທາງສິນລ້າງບາບ. ອາໄສສິນສັກສິດນີ້, ພຣະອົງໄດ້ຊົງໄຖ່ກູ້ລູກໃຫ້ຫວິດຈາກຄວາມຕາຍແລະໄດ້ປະທານໃຫ້ລູກຊີວິດໃໝ່ອັນແມ່ນຊີວິດນິລັນດອນນັ້ນເອງ. ໂຜດຊ່ວຍລູກໃຫ້ສຳນຶກໄດ້ເຖິງຄວາມຮັກທີ່ພຣະອົງຊົງມີຕໍ່ລູກ. ເພື່ອລູກຈະໄດ້ເປັນພິຍານເຖິງຄວາມຮັກນີ້ໃຫ້ກັບຄົນອື່ນ. ອາແມນ.

ຄຸນພໍ່ ອັງຕວນ ກຽດຕິສັກ